ວັກຊີນໂຄວິດ-19

ຮູ້ຄວາມຈິງ.

ດຽວນີ້ ມີໃຫ້ ສຳລັບ ຜູ້ໃຫຍ່, ເດັກນ້ອຍ ແລະ ເດັກເກີດໃໝ່

ປົກປ້ອງລູກຂອງທ່ານ. ປ້ອງກັນຊຸມຊົນຂອງທ່ານ.



ເດັກນ້ອຍ ແລະ ໄວລຸ້ນຈະໄດ້ຮັບການປົກປ້ອງທີ່ດີທີ່ສຸດເມື່ອພວກເຂົາໄດ້ຮັບຢາວັກຊີນໂຄວິດ-19 ຕາມກຳນົດຂອງເຂົາເຈົ້າ.

ວັກຊີນປ້ອງກັນທຸກຄົນ, ລວມທັງເດັກນ້ອຍ ແລະ ຊາວໜຸ່ມ, ຈາກການເປັນໂຄວິດ-19. ຢາວັກຊີນຍັງປ້ອງກັນເດັກນ້ອຍ ແລະ ຊາວໜຸ່ມຈາກການເຈັບປ່ວຍຂັ້ນຮຸນແຮງຖ້າພວກເຂົາເຈັບປ່ວຍ.

ມີສາຍພັນໂຄວິດ-19 ໃໝ່ເກີດຂຶ້ນຊຶ່ງເຮັດໃຫ້ແຜ່ເຊື້ອໄດ້ງ່າຍ ແລະ ອາດຈະເຮັດໃຫ້ມີອາການຮຸນແຮງຂຶ້ນ. ຢາວັກຊີນສາມາດປ້ອງກັນສາຍພັນໃໝ່ທີ່ເກີດຂຶ້ນ.

ການສັກຢາໃຫ້ເດັກນ້ອຍ ແລະ ຊາວໜຸ່ມ ຈະຊ່ວຍໃນການປ້ອງກັນຫ້ອຊຸມຊົນ.

ຄົນທີ່ໄດ້ຮັບການສັກຢາວັກຊີນໂຄວິດ-19 ຕາມກຳນົດແມ່ນເກືອບຈະບໍ່ສາມາດແຜ່ເຊື້ອໄວຣັສໃຫ້ກັບຄົນອື່ນໆໄດ້. ເມື່ອເດັກນ້ອຍທີ່ມີສິດໄດ້ຮັບຢາວັກຊີນມັນຈະປ້ອງກັນ:

- ໝູ່ເພື່ອນ ແລະ ຄອບຄົວຂອງພວກເຂົາຜູ້ທີ່ຍັງບໍ່ທັນໄດ້ຮັບການສັກຢາວັກຊີນ.
- ຜູ້ສູງອາຍຸ ແລະ ຄົນທີ່ມີພະຍາດປະຈຳຕົວທີ່ມີຄວາມສ່ຽງສູງທີ່ຈະເປັນພະຍາດທີ່ຮຸນແຮງຈາກການເປັນໂຄວິດ-19.

ຖ້າວ່າເດັກນ້ອຍ ແລະ ຜູ້ໃຫຍ່ໄດ້ຮັບວັກຊີນເປັນຈຳນວນຫຼາຍ, ມັນຍັງຈະຊ່ວຍໃຫ້ໂຮງຮຽນ ແລະ ທຸລະກິດສາມາດເປີດກິດຈະການໄດ້.

ປອດໄພ ແລະ ມີ ປະສິດທິພາບ

- ບໍ່ມີວັກຊີນຊະນິດໃດໄດ້ຖືກທົດສອບຄວາມປອດໄພຫຼາຍຄືແນວນີ້ ໃນປະຫວັດສາດຂອງສະຫະລັດ.
- ຢາວັກຊີນໄດ້ຖືກພິສູດວ່າປອດໄພສຳລັບເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ໃຫຍ່ ລວມທັງ ກຸ່ມຄົນທີ່ມີຫຼາກຫຼາຍເຊື້ອຊາດ, ຊົນເຜົ່າ ແລະ ອາຍຸ.
- ວັກຊີນໂຄວິດ-19 ບໍ່ມີຜົນກະທົບຕໍ່ການເປັນຜູ້ໃຫຍ່ ຫຼື ການຈະເລີນພັນຂອງພວກເຂົາໃນອານາຄົດ. ວັກຊີນຈະບໍ່ເຮັດໃຫ້ລູກຂອງທ່ານບໍ່ສາມາດມີລູກຂອງພວກເຂົາໄດ້ໃນອະນາຄົດ.

ວັກຊີນຟຣີສຳລັບທຸກຄົນ

- ທ່ານ ແລະ ລູກຂອງທ່ານສາມາດຮັບຢາວັກຊີນຟຣີ ໂດຍບໍ່ຄຳນຶງເຖິງ **ສະຖານະພາບການເຂົ້າເມືອງ**.
- ບໍ່ວ່າຈະເປັນທ່ານເອງ ຫຼື ລູກຂອງທ່ານ ບໍ່ຈຳເປັນຕ້ອງ **ສະແດງບັດປະຈຳຕົວ** ຫຼື ມີ **ປະກັນໄພສຸຂະພາບ** ເພື່ອຮັບຢາວັກຊີນຟຣີ.

NRC-RIM
National Resource Center for Refugees, Immigrants, and Migrants

25 Jul 2022

ສຳລັບຂໍ້ມູນເພີ່ມເຕີມ: cdc.gov/coronavirus

ສິ່ງທີ່ຄາດຫວັງ

ເມື່ອລູກຂອງທ່ານໄດ້ຮັບການສັກຢາວັກຊີນຕາມກຳນົດຂອງພວກເຂົາ, ພວກເຂົາຈະປອດໄພເມື່ອພວກເຂົາເຂົ້າໂຮງຮຽນ, ຫຼິ້ນກິລາ ແລະ ຢ້ຽມຢາມໝູ່ເພື່ອນ ແລະ ຄອບຄົວຂອງພວກເຂົາ. ການສັກຢາວັກຊີນຕາມກຳນົດໝາຍເຖິງການໄດ້ຮັບວັກຊີນສອງເຂັມ ແລະ ໄດ້ຮັບເຂັມກະຕຸ້ນຕາມສິດທີ່ພວກເຂົາຄວນຈະໄດ້ຮັບ.



ຢູ່ບ່ອນນັດໝາຍ:

- ກ່ອນທີ່ນາງພະຍາບານ ຫຼື ທ່ານໝໍຈະສັກຢາວັກຊີນໃຫ້ແກ່ລູກຂອງທ່ານ, ພວກເຂົາຈະບອກທ່ານກ່ຽວກັບຢາວັກຊີນ, ທົບທວນເບິ່ງປະຫວັດການປິ່ນປົວສຸຂະພາບຂອງລູກທ່ານ ແລະ ມັກຈະສອບຖາມທ່ານຄືກັນຖ້າທ່ານມີຄຳຖາມ.
- ລູກຂອງທ່ານຈະຕ້ອງພັກເປັນເວລາ 15–30 ນາທີ ເພື່ອໃຫ້ແນ່ໃຈວ່າພວກເຂົາບໍ່ແພ້ຢາ.



ຜົນຂ້າງຄຽງລະດັບກາງ ແມ່ນເລື່ອງປົກກະຕິ

ຜົນຂ້າງຄຽງບໍ່ໝາຍຄວາມວ່າລູກຂອງທ່ານຈະເປັນໂຄວິດ-19.

ຜົນຂ້າງຄຽງ ໝາຍເຖິງວັກຊີນກຳລັງສອນຮ່າງກາຍຂອງລູກທ່ານໃຫ້ຕໍ່ສູ້ກັບໂຄວິດ-19 ໄດ້ແນວໃດ.

ຜົນຂ້າງຄຽງອາດຈະປະກອບດ້ວຍ:

- ☐ ປວດແຂນ ຫຼື ແຂນໃຄ່ ຢູ່ບ່ອນທີ່ສັກວັກຊີນ
- ☐ ອິດເມື່ອຍ
- ☐ ເຈັບຫົວ
- ☐ ປວດກ້າມຊີ້ນ
- ☐ ໜາວສັ່ນ
- ☐ ເປັນໄຂ້
- ☐ ປວກຮາກ



ຜົນຂ້າງຄຽງທີ່ຮຸນແຮງ ແມ່ນເກີດຂຶ້ນໄດ້ຍາກ

ວັກຊີນແມ່ນປອດໄພ. ມີຄວາມເປັນໄປໄດ້ທີ່ທ່ານຈະມີອາການພາວະແຊກຊ້ອນຈາກໂຄວິດ-19 ຂັ້ນຮຸນແຮງ ຫຼາຍກວ່າການຜົນຂ້າງຄຽງຂອງການສັກຢາວັກຊີນໂຄວິດ-19.

ໄວລຸ້ນຈຳນວນໜ້ອຍທີ່ມີປະສົບກັບຜົນຂ້າງຄຽງເຊັ່ນ ຫົວໃຈອັກເສບ (ເອີ້ນວ່າ ກ້າມຊີ້ນຫົວໃຈອັກເສບ - myocarditis ຫຼື ເຫຍື່ອຫຸ້ມຫົວໃຈອັກເສບ - pericarditis) ຫຼື ເລືອດກ້ຳ.

- ຜົນຂ້າງຄຽງຂັ້ນຮຸນແຮງ **ພົບເຫັນໄດ້ຍາກ**
- ຜົນຂ້າງຄຽງຂັ້ນຮຸນແຮງ **ສາມາດປິ່ນປົວໄດ້** ແລະ ຄົນສ່ວນຫຼາຍທີ່ມີອາການເຫຼົ່ານັ້ນແມ່ນປິ່ນປົວເຊົາແລ້ວ
- ປະໂຫຍດຂອງວັກຊີນແມ່ນດີກວ່າຜົນຂ້າງຄຽງຂອງມັນ

ສອບຖາມທ່ານໝໍເພື່ອຂໍຂໍ້ມູນເພີ່ມເຕີມ

ບອກໃຫ້ທ່ານໝໍ ແລະ ນາງພະຍາບານຂອງລູກທ່ານເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບວັກຊີນໂຄວິດ-19 ແລະ ວັກຊີນອື່ນໆທີ່ລູກຂອງທ່ານອາດຈະໄດ້ຮັບ.

NRC-RIM
National Resource Center for Refugees, Immigrants, and Migrants

ສຳລັບຂໍ້ມູນເພີ່ມເຕີມ: cdc.gov/coronavirus